**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ເລກທີ 2403 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 24 ພຶດສະພາ 2024

# ຂໍ້ຕົກລົງ

## ວ່າດ້ວຍລະບອບປະຊຸມສ່ອງແສງ ແລະ ການລາຍງານ ຂອງຄະນະຮັບຜິດຊອບວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ໃນຂະແໜງການສຶກສາທິການ ແລະ ກິລາ

- ອີງຕາມ ຄໍາສັ່ງວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ໃນຂະແໜງສຶກສາທິການ ແລະ ກິລາ ສະບັບເລກທີ 1073/ສສກ, ລົງວັນທີ 03 ຕຸລາ 2022;
- ອີງຕາມ ມະຕິກອງປະຊຸມ ຄະນະຮັບຜິດຊອບວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ຂັ້ນກະຊວງສຶກສາທິການ ແລະ ກິລາ ຄັ້ງວັນທີ 19 ຕຸລາ 2023;
- ອີງຕາມ ໜັງສືສະເໜີຂອງກົມກວດກາ ສະບັບເລກທີ 78/ກກ, ລົງວັນທີ 9 ພຶດສະພາ 2024.

## ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ເພື່ອເປັນບ່ອນອີງໃຫ້ແກ່ຄະນະຮັບຜິດຊອບວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ໃນຂະແໜງການສຶກສາທິການ ແລະ ກິລາ ແຕ່ລະຂັ້ນ ໃນການຈັດປະຊຸມສ່ອງແສງ ແລະ ລາຍງານການເຄື່ອນໄຫວວຽກງານ ໃຫ້ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ໃຫ້ເປັນປົກກະຕິ ແລະ ທັນຕາມກໍານົດເວລາ.

**ມາດຕາ 2 ລະບອບປະຊຸມສ່ອງແສງ**

ລະບອບປະຊຸມສ່ອງແສງ ຂອງຄະນະຮັບຜິດຊອບແຕ່ລະຂັ້ນ ໃຫ້ປະຕິບັດ ດັ່ງນີ້:

1. ຂັ້ນສະຖານການສຶກສາ ແລະ ກິລາ ພາກລັດ ແລະ ເອກະຊົນ (ນັບທັງສະຫະພັນກິລາປະເພດຕ່າງໆ): ກໍານົດເອົາອາທິດທີໜຶ່ງ ຂອງເດືອນ ມີນາ, ມິຖຸນາ, ກັນຍາ ແລະ ເດືອນທັນວາ;
2. ຂັ້ນເມືອງ: ກໍານົດເອົາອາທິດທີສອງ ຂອງເດືອນ ມີນາ, ມິຖຸນາ, ກັນຍາ ແລະ ເດືອນທັນວາ;
3. ຂັ້ນແຂວງ: ກໍານົດເອົາອາທິດທີສາມ ຂອງເດືອນ ມີນາ, ມິຖຸນາ, ກັນຍາ ແລະ ເດືອນທັນວາ;
4. ຂັ້ນກະຊວງ: ກໍານົດເອົາອາທິດທີສີ່ ຂອງເດືອນ ມີນາ, ມິຖຸນາ, ກັນຍາ ແລະ ເດືອນທັນວາ;

**ສໍາລັບບັນດາ ຫ້ອງການ, ກົມ, ສໍານັກພິມສຶກສາ ແລະ ກິລາ, ສະຖາບັນ, ສູນ, ນັບທັງສາມອົງການຈັດຕັ້ງມະຫາຊົນ, ສະມາຄົມການສຶກສາພາກເອກະຊົນ ແມ່ນໃຫ້ສໍາເລັດກ່ອນອາທິດທີສີ່** ຂອງເດືອນ ມີນາ, ມິຖຸນາ, ກັນຍາ ແລະ ເດືອນທັນວາ;

ຄະນະຮັບຜິດຊອບທັງໝົດ 4 ຂັ້ນ ຕ້ອງຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນ ປະຈຳ 6 ເດືອນ ແລະ ປະຈຳປີ;

ກໍລະນີມີຄວາມຈຳເປັນຮີບດ່ວນ ຄະນະຮັບຜິດຊອບແຕ່ລະຂັ້ນ ຕ້ອງຈັດກອງປະຊຸມວິສາມັນຂຶ້ນ ຫຼື ຈັດຮ່ວມກັບກອງປະຊຸມອື່ນທີ່ກ່ຽວຂ້ອງ.

**ມາດຕາ 3 ການລາຍງານ**

ຄະນະຮັບຜິດຊອບແຕ່ລະຂັ້ນ ຕ້ອງລາຍງານຂັ້ນເທິງຖັດຕົນ ພາຍຫຼັງສຳເລັດກອງປະຊຸມສ່ອງແສງ ພາຍໃນກຳນົດເວລາ ທີ່ໄດ້ລະບຸໄວ້ໃນ ມາດຕາ 2 ຂອງຂໍ້ຕົກລົງສະບັບນີ້ :

**1.** ສະຖານການສຶກສາ ແລະ ກິລາ ພາກລັດ ແລະ ເອກະຊົນ (ນັບທັງສະຫະພັນກິລາປະເພດຕ່າງໆ):

**1.1** ສະຖານການສຶກສາ ແລະ ກິລາ ທີ່ຂຶ້ນກັບຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ ໃຫ້ລາຍງານຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ;

**1.2** ສະຖານການສຶກສາ ແລະ ກິລາ ທີ່ຂຶ້ນກັບພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ໃຫ້ລາຍງານພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ;

**1.3** ສະຖານການສຶກສາ ແລະ ກິລາ ທີ່ຂຶ້ນກັບບັນດາກົມແມ່ນໃຫ້ລາຍງານກົມທີ່ຕົນຂຶ້ນກັບ.

**2.** ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ: ໃຫ້ລາຍງານຫາຂັ້ນແຂວງ;

**3.** ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ: ໃຫ້ລາຍງານຂັ້ນກະຊວງ;

**4.** ບັນດາ ຫ້ອງການ, ກົມ, ສຳນັກພິມສຶກສາ ແລະ ກິລາ, ສະຖາບັນ, ສູນ, ນັບທັງສາມອົງການຈັດຕັ້ງມະຫາຊົນ, ສະມາຄົມການສຶກສາພາກເອກະຊົນ: ໃຫ້ລາຍງານຂັ້ນກະຊວງ.

ກໍລະນີຮີບດ່ວນ ຄະນະຮັບຜິດຊອບແຕ່ລະຂັ້ນ ຕ້ອງລາຍງານຂັ້ນເທິງຖັດຕົນທັນທີ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ຫ້ອງການກະຊວງສຶກສາທິການ ແລະ ກິລາ, ບັນດາ ກົມ, ສຳນັກພິມສຶກສາ-ກິລາ, ສະຖາບັນ, ສູນ; ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ; ຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ; ສະຖານການສຶກສາ ແລະ ກິລາ ພາກລັດ ແລະ ເອກະຊົນ, ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 5 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮອງ ລັດຖະມົນຕີ

ກະຊວງສຶກສາທິການ ແລະ ກິລາ ★ ລັດຖະມົນຕີ ★

ກິ່ງມະໂນ ພົມມະຫາໄຊ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ກະຊວງສຶກສາທິການ ແລະ ກິລາ**

ຊື່ການຈັດຕັ້ງປະກາດໃຊ້ເອກະສານ ເລກທີ /ຕົວອັກສອນຫຍໍ້

ສະຖານທີ, ວັນທີ....ເດືອນ(ລາວ) ປີ.......

## (ຮ່າງ) ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ຂອງ (ຊື່ການຈັດຕັ້ງ...............................)

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ (ຊື່ການຈັດຕັ້ງ........................) ສະບັບເລກທີ ......................... ລົງວັນທີ............
- ອີງຕາມ ຄຳສັ່ງວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ໃນຂະແໜງສຶກສາທິການ ແລະ ກິລາ ສະບັບເລກທີ 1073/ສສກ, ລົງວັນທີ 03 ຕຸລາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ໃນຂະແໜງສຶກສາທິການ ແລະ ກິລາ ສະບັບເລກທີ 795/ສສກ, ລົງວັນທີ 28 ກຸມພາ 2023;
- ອີງຕາມ ໜັງສືສະເໜີຂອງ ພະແນກ/ຂະແໜງ/ໜ່ວຍງານ(ການຈັດຕັ້ງທີ່ຮັບຜິດຊອບ.....................)ສະບັບ ເລກທີ........, ລົງວັນທີ................

### ຫົວໜ້າ/ຜູ້ອຳນວຍການ ການຈັດຕັ້ງ.....................ຕົກລົງ:

**ມາດຕາ 1** ແຕ່ງຕັ້ງຄະນະຮັບຜິດຊອບວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ຂອງ (ການຈັດຕັ້ງທີ່ຮັບຜິດຊອບ...............................) ມີດັ່ງນີ້ :

**ກ. ຄະນະຮັບຜິດຊອບ ປະກອບມີ:**

1. ທ່ານ............ຫົວໜ້າ/ຜູ້ອຳນວຍການ........................... ເປັນຫົວໜ້າ
2. ທ່ານ............ຮອງຫົວໜ້າ/ຮອງຜູ້ອຳນວຍການ (ຜູ້ຊີ້ນຳວຽກງານກວດກາ) ເປັນຮອງຫົວໜ້າ
3. ທ່ານ.............ຫົວໜ້າພະແນກ/ຂະແໜງ/ໜ່ວຍງານ (ກົງຈັກການຈັດຕັ້ງຂອງຕົນ) ເປັນຄະນະ
4. ທ່ານ.............ຫົວໜ້າພະແນກ/ຂະແໜງ/ໜ່ວຍງານ (ກົງຈັກການຈັດຕັ້ງຂອງຕົນ) ເປັນຄະນະ
5. ທ່ານ............ປະທານສະຫະພັນກຳມະບານ, (ພາກສ່ວນຕົນ) ເປັນຄະນະ
6. ທ່ານ............ເລຂາ ຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ(ພາກສ່ວນຕົນ) ເປັນຄະນະ
7. ທ່ານ............ປະທານສະຫະພັນແມ່ຍິງ (ພາກສ່ວນຕົນ) ເປັນຄະນະ
8. ທ່ານ........... ຫົວໜ້າພະແນກ/ຂະແໜງ/ໜ່ວຍງານ ພາກສ່ວນທີ່ຮັບຜິດຊອບວຽກງານກວດກາ (ຫົວໜ້າກອງເລຂາ) ເປັນຄະນະ

**ຂ. ກອງເລຂາ ປະກອບມີ:**

1. ທ່ານ............ຫົວໜ້າພະແນກ/ຂະແໜງ/ໜ່ວຍງານ ພາກສ່ວນທີ່ຮັບຜິດຊອບວຽກງານກວດກາ ເປັນຫົວໜ້າ
2. ທ່ານ............ຮອງຫົວໜ້າພະແນກ/ຂະແໜງ/ໜ່ວຍງານ ພາກສ່ວນທີ່ຮັບຜິດຊອບວຽກງານກວດກາ ເປັນຮອງຫົວໜ້າ
3. ທ່ານ........ວິຊາການຂອງພະແນກ/ຂະແໜງ/ໜ່ວຍງານ ພາກສ່ວນທີ່ຮັບຜິດຊອບວຽກງານກວດກາ ຈຳນວນໜຶ່ງ ເປັນຜູ້ຊ່ວຍວຽກ

**ມາດຕາ 2 ໜ້າທີ່ ແລະ ຂອບເຂດສິດ ຂອງຄະນະຮັບຜິດຊອບ**

**ຄະນະຮັບຜິດຊອບມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:**

1. ຄົ້ນຄວ້າ, ເຊື່ອມຊຶມ, ເຜີຍແຜ່ ແລະ ຜັນຂະຫຍາຍ ບັນດາກົດໝາຍ, ນິຕິກຳໃຕ້ກົດໝາຍ;
2. ສ້າງ, ປັບປຸງ, ແຜນງານ, ໂຄງການກ່ຽວກັບວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ໃນຂະແໜງສຶກສາທິການ ແລະ ກິລາ ມາເປັນແຜນການເຄື່ອນໄຫວວຽກງານຂອງຕົນ;
3. ຊຸກຍູ້ ຕິດຕາມ ກວດກາ, ສະກັດກັ້ນ ແລະ ແກ້ໄຂສະພາບປະກົດການຫຍໍ້ທໍ້ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງ, ປັບປຸງ ແລະ ນຳໃຊ້ ເຄື່ອງມືຕິດຕາມ ກວດກາການສະກັດກັ້ນ ແລະ ແກ້ໄຂສະພາບປະກົດການຫຍໍ້ທໍ້ ດ້ານຕ່າງໆ ຂອງຕົນ ແລະ ຂັ້ນເທິງຖັດຕົນ;
5. ສະຫຼຸບການເຄື່ອນໄຫວວຽກງານ, ປະຊຸມສ່ອງແສງ ແລະ ລາຍງານສະພາບປະກົດການຫຍໍ້ທໍ້ ທຸກໆສາມ ເດືອນ ໃຫ້ຂັ້ນເທິງຖັດຕົນ;
6. ...............................................(ອີງການຈັດຕັ້ງທີ່ກ່ຽວຂ້ອງ ສາມາດຕື່ມໜ້າທີ່ຂອບເຂດສິດ ໂດຍໃຫ້ສອດຄ່ອງຕາມກົດໝາຍ, ລະບຽບການ ແລະ ແທດເໝາະກັບການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ).............
7. ປະຕິບັດໜ້າທີ່ ແລະ ຂອບເຂດສິດອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 3 ໜ້າທີ່ ແລະ ຂອບເຂດສິດ ຂອງກອງເລຂາ**

**ກອງເລຂາ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:**

1. ເປັນໃຈກາງປະສານງານກັບພາກສ່ວນທີ່ກ່ຽວຂ້ອງກ່ຽວກັບການເຄື່ອນໄຫວວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ໃນຂັ້ນຂອງຕົນ;
2. ສ້າງແຜນການ, ສະຫຼຸບ, ຖອດຖອນບົດຮຽນ ແລະ ລາຍງານ ໃຫ້ຄະນະຮັບຜິດຊອບຂັ້ນຕົນ ຫຼື ຄະນະ ຮັບຜິດຊອບຂັ້ນເທິງຖັດຕົນ ເປັນແຕ່ລະໄລຍະ;
3. ເຂົ້າຮ່ວມ ບັນທຶກກອງປະຊຸມສາມັນ, ວິສາມັນ ຂອງຄະນະຮັບຜິດຊອບຂັ້ນຕົນ;
4. .......(ຊຶ່ການຈັດຕັ້ງທີ່ກ່ຽວຂ້ອງ ສາມາດຕື່ມໜ້າທີ່ ແລະ ຂອບເຂດສິດ ໂດຍໃຫ້ສອດຄ່ອງຕາມກົດໝາຍ, ລະບຽບການ ແລະ ແທດເໝາະກັບການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ).............
5. ສະຫຼຸບ ລາຍງານການຈັດຕັ້ງປະຕິບັດວຽກງານພາຍໃນຂອງຕົນ ໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ;
6. ປະຕິບັດໜ້າທີ່ ແລະ ນຳໃຊ້ສິດອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 4 ລະບອບປະຊຸມສ່ອງແສງ ແລະ ການລາຍງານ**

ການຈັດກອງປະຊຸມສ່ອງແສງໃຫ້ຈັດຕັ້ງທຸກໆ ສາມ ເດືອນ ໂດຍກຳນົດເອົາອາທິດທີສອງ ຫາ ອາທິດທີສາມ ຂອງເດືອນ ມີນາ, ມິຖຸນາ, ກັນຍາ ແລະ ເດືອນທັນວາ;

ລາຍງານການເຄື່ອນໄຫວວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຂອງຕົນໃຫ້ຄະນະຮັບຜິດຊອບຂັ້ນກະຊວງ ກ່ອນອາທິດທີສີ່ ຂອງເດືອນ ມີນາ, ມິຖຸນາ, ກັນຍາ ແລະ ເດືອນທັນວາ;

ກໍລະນີມີຄວາມຈຳເປັນຮີບດ່ວນ ຄະນະຮັບຜິດຊອບແຕ່ລະຂັ້ນ ຕ້ອງຈັດກອງປະຊຸມວິສາມັນຂຶ້ນ ຫຼື ຈັດຮ່ວມກັບກອງປະຊຸມອື່ນທີ່ກ່ຽວຂ້ອງ ແລະ ຕ້ອງລາຍງານຂັ້ນເທິງຖັດຕົນທັນທີ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

ມອບໃຫ້ (ພະແນກ/ຂະແໜງ/ໜ່ວຍງານ ພາກສ່ວນທີ່ຮັບຜິດຊອບວຽກງານກວດກາ...............), ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ຜັນຂະຫຍາຍຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ;

ຫ້ອງການກະຊວງສຶກສາທິການ ແລະ ກິລາ, ບັນດາ ກົມ, ສຳນັກພິມສຶກສາ ແລະ ກິລາ, ສະຖາບັນ, ສູນ; ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ; ຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ; ສະຖານການສຶກສາ ແລະ ກິລາ ພາກລັດ ແລະ ເອກະຊົນ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 6 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າ/ຜູ້ອຳນວຍການ ການຈັດຕັ້ງ...............**

**<u>ໝາຍເຫດ:</u> ການຈັດຕັ້ງ ແມ່ນບັນດາ ຫ້ອງການ, ກົມ, ສຳນັກພິມສຶກສາ ແລະ ກິລາ, ສະຖາບັນ, ສູນ, ນັບທັງ ສາມອົງການຈັດຕັ້ງມະຫາຊົນ ຂັ້ນກະຊວງສຶກສາທິການ ແລະ ກິລາ. (ເວລາອະນຸມັດ ໃຫ້ລຶບໝາຍເຫດໃນເອກະສານສະບັບນີ້ອອກ)**